ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສຳນັກງານ ຄຄຊ
ເລກທີ 1019
ວັນທີ 20 OCT 2016
ໂທລະສັບ 021 217770

ເລກທີ: 42 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 18 ຕຸລາ 2016

## ລາຍງານການເຄື່ອນໄຫວປະຈຳອາທິດ ທີ 03-07/10/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິລະບຽບວິໄນຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຂັ້ມງວດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມຫຼັກການລວມສູນປະຊາທິປະໄຕ ເຮັດວຽກເປັນໝູ່ຄະນະບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

##### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ 0,18% ເມື່ອທຽບໃສ່ເງິນເອີໂຣ ແລະ ແຂງຄ່າຂຶ້ນເມື່ອທຽບກັບຫຼາຍສະກຸນເງິນຂອງພາກພື້ນ, ພາຍຫຼັງກະຊວງແຮງງານຂອງສະຫະລັດລາຍງານຕົວເລກການຈ້າງງານນອກພາກກະສິກຳ ເພີ່ມຂຶ້ນ 156.000 ຄົນ ໃນເດືອນ 09/2016 ຊຶ່ງຕໍ່າກວ່າຕົວເລກທີ່ຄາດໄວ້ທີ່ລະດັບ 167.000 ຄົນ ແລະ ອັດຕາການວ່າງງານໃນເດືອນ 09/2016 ເພີ່ມຂຶ້ນມາຢູ່ທີ່ລະດັບ 5%.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 30/09/2016 | ອາທິດນີ້ 06/09/2016 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1179 | 1,1199 | -0,18% |
| ໂດລາ/ເຢນ | 101,07 | 103,62 | -2,46% |
| ໂດລາ/ບາດ | 34,650 | 34,850 | -0,57% |
| ໂດລາ/ເປໂຊ | 48,49 | 48,27 | 0,46% |
| ໂດລາ/ຣູເປັຍ | 13.047 | 12.995 | 0,40% |
| ໂດລາ/ໂດລາສິງກະໂປ | 1,3649 | 1,3707 | -0,42% |
| ໂດລາ/ຢວນ | 6,6690 | 6,6747 | -0,09% |

1.2 <u>ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ</u>

ລາຄານ້ຳມັນເພີ່ມຂຶ້ນ 3,95% ເປັນ 51,29 ໂດລາ/ບາເຣວ ພາຍຫຼັງກຸ່ມໂອເປັກມີມະຕິຈະປັບຫຼຸດກຳລັງການຜະລິດນ້ຳມັນລົງມາຢູ່ທີ່ລະດັບ 32,5-33 ລ້ານບາເຣວ/ວັນ ບວກກັບສຳນັກງານດ້ານພະລັງງານຂອງສະຫະລັດ (EIA) ລາຍງານຕົວເລກນ້ຳມັນໃນຄັງຫຼຸດລົງເຫຼືອ 499,7 ລ້ານບາເຣວ.ສ່ວນລາຄາຄຳຫຼຸດລົງ 4,63% ເປັນ 1.265,90 ໂດລາ/ອອນ.

2. <u>ສະພາບເສດຖະກິດເງິນຕາພາຍໃນ</u>

2.1 <u>ສະພາບອັດຕາແລກປ່ຽນພາຍໃນ</u>

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,13% ສຳລັບອັດຕາ ທຫກ ອ່ອນຄ່າລົງ 0,30% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,23% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,24% ສຳລັບອັດຕາຕະຫຼາດ. ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,61% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 1,94% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 2,76% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 5,06% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 30/09/2016 | | | ອາທິດນີ້ 06/10/2016 | | | % (+) ເງິນກີບແຂງ/(-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| <u>ອັດຕາທະຄານ</u>[1] | | | | | | | | | |
| ໂດລາ | 8.100,43 | 8.140,33 | 8.114,46 | 8.105,11 | 8.098,55 | 8.103,84 | -0,06% | 0,52% | 0,13% |
| ບາດ | 234,15 | 235,71 | 235,32 | 234,06 | 234,90 | 234,77 | 0,03% | 0,34% | 0,23% |
| <u>ອັດຕາຕະຫຼາດ</u> | | | | | | | | | |
| ໂດລາ | 8.320,00 | 8.356,67 | 8.338,33 | 8.350,00 | 8.376,67 | 8.363,33 | -0,36% | -0,24% | -0,30% |
| ບາດ | 240,67 | 242,67 | 241,67 | 240,50 | 241,67 | 241,08 | 0,07% | 0,41% | 0,24% |
| ຜິດດ່ຽງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 2,71% | 2,66% | 2,76% | 3,02% | 3,43% | 3,20% | | | |
| ບາດ | 2,79% | 2,95% | 2,70% | 2,75% | 2,88% | 2,69% | | | |

2.2 <u>ສະພາບຖານເງິນຕາ ແລະ ປະລິມານເງິນ M2</u>

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 1,58% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 3,80%;
- ປະລິມານເງິນ M2 ຫຼຸດລົງ 1,70% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,82%.

2.3 <u>ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ</u>

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈໍາອາທິດ (ວັນ03-06/10/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 60,49 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 77,25 ລ້ານໂດລາ ແລະ ຂາຍໂດລາໄດ້ 16,76 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 852,23 ລ້ານບາດ (ໃນນີ້ ຊື້ບາດໄດ້ 295,34 ລ້ານບາດ ແລະ ຂາຍບາດໄດ້ 1,147,57 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 22,41% ແລະ ຫຼຸດລົງ 29,38% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈໍານວນ 3,90 ລ້ານໂດລ້ານ ແລະ ເງິນບາດບໍ່ມີການເຄື່ອນໄຫວຊື້-ຂາຍ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 15,70 ລ້ານໂດລາ ແລະ ເງິນບາດ 56,00 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ເງິນໂດລາ ແລະ ເງິນບາດບໍ່ມີການເຄື່ອນໄຫວຊື້-ຂາຍ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 26-30/09/2016 | | ອາທິດທີ 03-06/10/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **77,42** | **479,28** | **77,25** | **295,34** | **-0,22%** | **-38,38%** |
| - ທ/ຄທຸລະກິດລັດ | 23,69 | 116,52 | 12,79 | 156,51 | -46,01% | 34,32% |
| - ທ/ຄທຸລະກິດອື່ນໆ | 53,73 | 362,76 | 64,46 | 138,83 | 19,97% | -61,73% |
| **2. ການຂາຍເງິນຕາຕ່າງປະເທດ** | **43,75** | **1,563,98** | **16,76** | **1.147,57** | **-61,69%** | **-26,63%** |
| - ທ/ຄທຸລະກິດລັດ | 16,86 | 161,46 | 16,65 | 177,50 | -1,25% | 9,93% |
| - ທ/ຄທຸລະກິດອື່ນໆ | 26,89 | 1.402,52 | 0,11 | 970,07 | -99,59% | -30,83% |
| **ຊື້-ຂາຍສຸດທິ ທທກ** | **33,67** | **-1.084,70** | **60,49** | **-852,23** | **79,66%** | **-21,43%** |
| - ຜິດດ່ຽງ ຊື້-ຂາຍ | 43,49% | -226,32% | 78,30% | -288,56% | 80,05% | 27,50% |
| - ມູນຄ່າການຊື້-ຂາຍ | 121,17 | 2.043,26 | **94,01** | **1.442,91** | **-22,41%** | **-29,38%** |
| **3. ການຊື້ຂາຍລະຫວ່າງ ທຫລ ກັບ ທທກ** | -18,65 | -22,00 | -15,70 | -56,00 | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 18,65 | 22,00 | 15,70 | 56,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **5,95** | **63,70** | **3,90** | **0,00** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **80,13** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,02 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 09/2016 ຄາດວ່າຈະຢູ່ໃນລະດັບ 1,90% ຫຼຸດລົງຈາກ 1,97% ໃນເດືອນ 07/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນໍາໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 49,26 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ 44,9% ເມື່ອທຽບໃສ່ອາທິດຜ່ານມາ.

## III. ວຽກງານວິຊາສະເພາະ

### 1. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 984 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 101 ສະບັບ ເທົ່າກັບ 11,43% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 400,80 ຕື້ກີບ ຫຼຸດລົງ 40,05% ເມື່ອທຽບໃສ່ອາທິດຜ່ານມາ.

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (30/09/-06/10/2016) ມີຈຳນວນ 2.108 ຄັ້ງ ໂດຍມີມູນຄ່າ 701,89 ຕື້ກີບ ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 511 ຄັ້ງ.

### 2. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 997,4 ຈຸດ ເພີ່ມຂຶ້ນ 0,09% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 154.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 744,35 ລ້ານກີບ ຫຼຸດລົງ 5,17% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 90,69% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.819 ກີບ ຫຼຸດລົງ 8 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 59.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 285,78 ລ້ານກີບ ເພີ່ມຂຶ້ນ 366,13% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 78,80% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,34%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.892 ກີບ ເພີ່ມຂຶ້ນ 39 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 92.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 450,05 ລ້ານກີບ ຫຼຸດລົງ 37,80% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 99% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 13,84%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.200 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາ ທິດທີ່ຜ່ານມາ, ໃນອາທິດນີ້ ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.500 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 3.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 8,52 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 12,66%[5].

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສຳລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສຳລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.100 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[6].

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດ: ❶ ເປັນປະທານກອງປະຊຸມສ່ອງແສງວຽກງານສາຍພັກ ແລະ ສ່ອງແສງສາຍລັດ ປະຈຳເດືອນ ກັນຍາ 2016, ❷ ເປັນປະທານກອງປະຊຸມຄະນະສ້າງກົດໝາຍວ່າດ້ວຍລະບົບຊຳລະສະສາງ, ❸ ຮັບແຂກເຂົ້າພົບ ຂອງເອກອັກຄະລະຊະທູດ ອັງກິດ ປະຈຳລາວ;

- ສຳເລັດການເຂົ້າຮ່ວມ: ❶ ເຂົ້າຮ່ວມ ແລະ ເປັນປະທານເປີດພິທີແຂ່ງຂັນກິລາເນື່ອງໃນວັນສ້າງຕັ້ງ ທຫລ ຄົບຮອບ 48 ປີ ທີ່ ສະໜາມກິລາເຈົ້າອານຸວົງ; ❷ ກອງປະຊຸມລະດັບລັດຖະມົນຕີ ແລະ ຜູ້ວ່າການ ກອງປະຊຸມ IMF/WB ທີ່ ປະເທດ ສ. ອາເມລິກາ, ❸ ເຂົ້າຮ່ວມກອງປະຊຸມຄະນະປະຈຳສະພາແຫ່ງຊາດ ທີ່ ຫໍປະຊຸມສະພາແຫ່ງຊາດ, ❹ ເຂົ້າຮ່ວມກອງປະຊຸມປຶກສາຫາລືລະຫວ່າງລະບົບທະນາຄານ ແລະ ບັນດາກຸ່ມທຸລະກິດກ່ຽວກັບການເຂົ້າຫາແຫຼ່ງທຶນ ທີ່ ຫ້ອງປະຊຸມ (ຫສນຍ), ❺ ເຂົ້າພົບທ່ານຮອງນາຍົກລັດຖະມົນຕີ ກະຊວງປ້ອງກັນປະເທດ; ❻ ເຂົ້າຮ່ວມກອງປະຊຸມ SLC meeting in jakarta ປະເທດ ອິດໂດເນເຊຍ, ❼ ເຄື່ອນໄຫວວຽກງານທີ່ປະເທດ ສສ. ຫວຽດນາມ;

- ສຳເລັດການມອບ-ຮັບໃບອະນຸຍາດດຳເນີນທຸລະກິດຖາວອນຂອງ ບໍລິສັດ ວຽງຈັນ ເຊົ່າສິນເຊື່ອ ຈຳກັດ;

- ສຳເລັດການລົງກວດກາປະຈຳປີ 2015 ທະນາຄານ ອາເຣັສບີລາວ, ບໍລິສັດເອັສເຄກຣຸບ ແລະ ລັດວິສາຫະກິດໄປສະນີລາວ ໂອນເງິນດ່ວນ;

- ສຳເລັດການການວິເຄາ STR ຈຳນວນ 13 ສະບັບ ແລະ ໄດຮັບລາຍງານທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດ 16 ສະບັບ, ຮອດປະຈຸບັນ STR ລົມທັງໝົດມີ 440 ສະບັບ;

- ສຳເລັດການຈັດງານພິທີສະເຫຼີມສະລອງວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 48 ປີ.

4. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ກະກຽມ: ❶ ເຂົ້າຮ່ວມຟັງປາຖະກະຖາວັນການທູດລາວ ຄົບຮອບ 71 ປີ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສຸດຍອດອາຊຽນຄັ້ງທີ 28 ແລະ 29 ທີ່ຫ້ອງປະຊຸມໂຖສະນະອົບຮົມສູນກາງພັກຫຼັກ 6;

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ;

- ສືບຕໍ່ກະກຽມຈັດສຳມະນາກ່ຽວກັບ "ການສ້າງເອກະສານລາຍງານການເງິນ", ການຈັດຝຶກອົບຮົມສຳມະນາຮ່ວມ ກັບ ທະນາຄານແຫ່ງປະເທດໄທ ໃນຂອບຮ່ວມມືສອງຝ່າຍປະຈຳປີ 2016 ໃນຫົວຂໍ້ "Regulation and Supervision of E-Transaction" ແລະ ກະກຽມຄວາມພ້ອມດ້ານຕ່າງໆໃນການຈັດຝຶກອົບຮົມຮ່ວມກັບທະນາຄານແຫ່ງລັດຫວຽດນາມ ປະຈຳປີ 2016;

- ສືບຕໍ່ລົງເລິກຄົ້ນຄວ້າດ້ານນິຕິກຳຂອງ ບໍລິສັດ ມາຍ ເຊົ່າສິນເຊື່ອ ຈຳກັດ, ບໍລິສັດດີຈີບີລາວ ເຊົ່າສິນເຊື່ອ ຈຳກັດ, ສກຈບ ວາລີລັກ, ສກຈບ ຈະເລີນຊັບ, ສກຈບ ອຳມະລາ ມະຫາອຸດ ແລະ ສກຈບ ປັນຍາພອນ;

[6] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ສືບຕໍ່ລົງສໍາຫຼວດຖານະການລົງທຶນລະຫວ່າງປະເທດ (IIP Survey) ພາກສະໜາມ 3 ແຂວງພາກກາງ ແລະ 4 ແຂວງພາກໃຕ້;

- ກະກຽມຈັດສໍາມະນາ ໃນຫົວຂໍ້ "ການລົງທຶນຢ່າງມີອາຊີບກັບຮຸ່ນ" ຢູ່ວິທະຍາໄລເສດຖາບໍລິຫານທຸລະກິດ;

- ກະກຽມເຂົ້າຮ່ວມກອງປະຊຸມຄະນະກໍາມະການລະດັບອາວຸໂສ ກ່ຽວກັບການເຊື່ອມໂຍງທາງດ້ານການເງິນອາຊຽນ ຄັ້ງທີ 12 (12th Meeting of the Senior Level Committee (SLC) on ASEAN Financial Integration) ຢູ່ປະເທດ ອິນໂດເນເຊຍ;

- ກະກຽມເນື້ອໃນເຂົ້າຮ່ວມກອງປະຊຸມທີ່ປະເທດ ອັງກິດ ໃນຫົວຂໍ້ "Balanced economies, balanced societies: Promoting gender parity in politics and business";

- ສືບຕໍ່ກະກຽມຈັດກອງປະຊຸມເຜີຍແຜ່ ແລະ ຜັນຂະຫຍາດເນື້ອໃນກອງປະຊຸມວຽກງານກວດກາທົ່ວປະເທດ ຄັ້ງທີ III.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ເພັດສະຖາພອນ ແກ້ວວົງວິຈິດ